ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

# Lao Traditional Literature

## Lecture 14: Animal Stories

**Lecturer: Somthapheuy SYVONGSAK**

**Academic Year 2023-2024**

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

# ບົດສອນ

**ວິຊາ:** ວັນນະຄະດີພື້ນເມືອງລາວ

**ລະຫັດ:** 0907108

**ບົດທີ 6:** ນິທານສັດ

**ຜູ້ບັນຍາຍ:** ອຈ.ປທ. ສົມທະເພີຍ ສີວົງສັກ

**ປີ:** 3

**ພາກຮຽນ:** 1

**ສົກຮຽນ:** 2023-2024

ເວລາ: 90 ນາທີ

| | |
|---|---|
| **ຂັ້ນຕອນ 1 - ຜົນຮັບທີ່ຕ້ອງການ (Desire Results)** | |
| **ສ້າງເປົ້າໝາຍ (Goals):**<br>ນັກຮຽນຈະຮູ້:<br>- ຄວາມໝາຍ ແລະ ຈຸດພິເສດຂອງນິທານສັດ<br>- ການກຳເນີດ ແລະ ການຂະຫຍາຍຕົວຂອງນິທານສັດ<br>- ເນື້ອໃນສ່ອງແສງຂອງນິທານສັດ<br>- ສິລະປະຂອງນິທານສັດ | |
| **ຄວາມເຂົ້າໃຈ (Understand):**<br>ນັກຮຽນຈະເຂົ້າໃຈ:<br>- ຄວາມໝາຍ ແລະ ຈຸດພິເສດຂອງນິທານສັດ<br>- ການກຳເນີດ ແລະ ການຂະຫຍາຍຕົວຂອງນິທານສັດ<br>- ເນື້ອໃນສ່ອງແສງຂອງນິທານສັດ<br>- ສິລະປະຂອງນິທານສັດ | **ຄຳຖາມຫຼັກ (Questions):**<br>1) ຄວາມໝາຍ ແລະ ຈຸດພິເສດຂອງນິທານສັດ ມີແນວໃດແດ່?<br>2) ການກຳເນີດ ແລະ ການຂະຫຍາຍຕົວຂອງນິທານສັດເປັນແນວໃດ?<br>3) ນິທານບສັດ ມີເນື້ອໃນສ່ອງແສງຫຍັງແດ່?<br>4) ນິທານສັດ ມີສິລະປະແນວໃດ? |
| **ຄວາມຮູ້ (Knowledge):**<br>- ໃຫ້ນັກຮຽນຮູ້ໄດ້ເຖິງຄວາມໝາຍ, ຈຸດພິເສດ, ການກຳເນີດ, ການຂະຫຍາຍຕົວ, ເນື້ອໃນ ແລະສິລະປະການປະດິດແຕ່ງ ຂອງນິທານສັດ. | **ທັກສະ (Skills):**<br>- ອະທິບາຍໄດ້ເຖິງຄວາມໝາຍ, ຈຸດພິເສດ, ການກຳເນີດ, ການຂະຫຍາຍຕົວ, ເນື້ອໃນ ແລະສິລະປະການປະດິດແຕ່ງ ຂອງນິທານສັດ. |
| **ຂັ້ນຕອນ 2 - ຫຼັກຖານປະເມີນ** | |
| **ໜ້າວຽກສິດສອນ (Tasks):**<br>- ສັງເກດການຄົ້ນຄວ້າຂອງນັກສຶກສາ<br>- ສົນທະນາຖາມ-ຕອບ<br>- ແນະນຳການຄົ້ນຄວ້າ.<br>- ໃບວຽກບ້ານ | **ຫຼັກຖານອື່ນໆ (Other Evidence):**<br>- ລາຍງານຜົນການຄົ້ນຄວ້າ<br>- ເນື້ອໃນຄຳຕອບກິດຈະກຳຂອງນັກສຶກສາ<br>- ການສັງຮວມກິດຈະກຳ<br>- ຜົນການກວດວຽກບ້ານ |

**ຂັ້ນຕອນ 3 ແຜນການຮຽນ-ການສອນ (Teaching and Learning Plan)**

**ສື່ການສອນມີ:**

ປື້ມຕຳລາວິຊາວັນນະຄະດີພື້ນເມືອງລາວ, ປື້ມວັນນະຄະດີລາວ, ວັນນະຄະດີພື້ນເມືອງ1, ວັນນະຄະດີຊັ້ນມັດທະຍົມປີທີ4, ວັນນະຄະດີຊັ້ນມັດທະຍົມປີທີ5, ເວັບໄຊ້ຂໍ້ມູນ, ຄອມພິວເຕີ, ເຄື່ອງສາຍ LCD, ໃບກິດຈະກຳ.

**ກິດຈະກຳການຮຽນ**

**I. ທວນຄືນ ແລະ ລ້ຽວເຂົ້າສູ່ບົດຮຽນ:**

**ທວນຄືນບົດຮຽນເກົ່າ**

- ຄູນຳພານັກຮຽນທວນຄືນບົດຮຽນ ໂດຍໃຫ້ນັກຮຽນເວົ້າເຖິງເນື້ອໃນເລື່ອງ "ຊຽງໝ້ຽງຕອນພະຍາກິນຂີ້ແຮ້ງ" ແລະ ເລື່ອງ "ຕາບອດຄຳຊ້າງ".

**II. ຂັ້ນລ້ຽວເຂົ້າສູ່ບົດສອນ:**

**ບົດທີ 6**

**ນິທານສັດ**

**1. ຄວາມໝາຍ ແລະ ຈຸດພິເສດຂອງນິທານສັດ** ( 15 ນາທີ )

**ກິດຈະກຳ 1:**

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປື້ມຕຳລາ

1) ຄວາມໝາຍ ແລະ ຈຸດພິເສດຂອງນິທານສັດ ມີແນວໃດແດ່?

- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູສະຫຼຸບບົດຮຽນກິດຈະກຳ: (10 ນາທີ)

**1.1 ຄວາມໝາຍຂອງນິທານສັດ**

ນິທານສັດ ແມ່ນເລື່ອງເລົ່າພື້ນເມືອງປະເພດໜຶ່ງ ທີ່ພັນລະນາເຖິງສັດ ແລະ ຊີວິດຂອງສັດ. ນິທານສັດມີລັກສະນະພິເສດທີ່ແຕກຕ່າງຈາກເລື່ອງເລົ່າພື້ນເມືອງປະເພດອື່ນໆ ທາງດ້ານການປະກອບສ້າງບົດເລື່ອງເພື່ອມາປຽບທຽບກັບຄົນ.

ນິທານສັດສ່ວນຫຼາຍເປັນບົດເລື່ອງສັ້ນກະທັດຮັດ ແລະ ມີເນື້ອໃນສຶກສາທາງດ້ານແນວຄິດ. ບົດເລື່ອງຕ່າງໆສະຫຼຸບດ້ວຍຄຳເວົ້າທີ່ເປັນຄະຕິເຕືອນໃຈເຊັ່ນ: ຄຳສຸພາສິດເພື່ອຍົກສາຄຸນສົມບັດຂອງຄົນ ຕົວຢ່າງ ບົດເລື່ອງໃນນິທານນາງຕັນໄຕ ແລະ ນິທານສຽວສະຫວາດເປັນຕົ້ນ.

ນິທານສັດນອກຈາກອະທິບາຍເຖິງຈຸດພິເສດ ແລະ ລັກສະນະຂອງສັດແລ້ວ ຍັງມີຄວາມໝາຍທາງດ້ານສັງຄົມອີກ ດັ່ງບົດເລື່ອງ ນົກເຄົ້າຕາເຫຼືອງ, ນົກເຄົ້າແມວກັບຟານ, ນົກຖົ່ວຫົວຫງອກເປັນຕົ້ນ (ບຸນລ້ອມ ສີບຸນເຮືອງ ແລະຄະນະ, 2014).

**1.2 ຈຸດພິເສດຂອງນິທານສັດ**

ນິທານສັດ ມັນເປັນເລື່ອງເລົ່າພື້ນເມືອງທີ່ມີລັກສະນະພິເສດ ແລະ ເອກະລັກ ເຊິ່ງມີຄວາມແຕກຕ່າງກັບເລື່ອງເລົ່າພື້ນເມືອງປະເພດອື່ນໆ; ທາງດ້ານການປະກອບສ້າງຂອງບົດເລື່ອງ , ແລະ ຕົວລະຄອນ ມັນໄດ້ພັນລະນາກ່ຽວ

ກັບສັດ ໂດຍຖືເອົາສັດມາເປັນຕົວລະຄອນຂອງເລື່ອງ, ເວົ້າເຖິງສັດເພື່ອເວົ້າເຖິງຄົນ; ສ່ວນຫຼາຍເປັນບົດເລື່ອງທີ່ສັ້ນ ເຊິ່ງປາກົດການຕ່າງໆທີ່ສ້າງຂຶ້ນດ້ວຍຈິດສຳນຶກນັ້ນມີທັງບັນຫາຈັດຈະທຳ ທັດສະນະຄຸນສົມບັດ ແລະ ບົດຮຽນທີ່ຄົນເຮົາໄດ້ເຮັດມາ ດ້ວຍເຫດນັ້ນການປະກອບສ້າງຂອງບົດເລື່ອງຍາມໃດກໍ່ໄດ້ແບ່ງເປັນສອງພາກສ່ວນຢ່າງຈະແຈ້ງ: ພາກສ່ວນເຫດການ ( ບົດເລື່ອງ ) ແລະ ພາກສ່ວນຄວາມໝາຍ ( ຖອດອອກມາຈາກປາກົດການຂອງບົດເລື່ອງ ). ບົດເລື່ອງເຄີຍລົງທ້າຍດ້ວຍບັນຫາສັດຈະທຳ ຫຼື ຄຳສຸພາສິດທີ່ເປັນຄະຕິເຕືອນໃຈ.

ໃນເບື້ອງຕົ້ນ, ນິທານສັດຍັງເປັນບົດເລື່ອງເລົ່າກ່ຽວກັບສັດຄືການອາທິບາຍກ່ຽວກັບຈຸດພິເສດ, ລັກ ສະນະຮູບຮ່າງ, ສີສັນ, ສຽງຮ້ອງຂອງແຕ່ລະປະເພດສັດ. ຈຸດປະສົງນິທານປະເພດນີ້ ຕົ້ນຕໍແມ່ນສຶກສາຄວາມຮູ້ໃຫ້ແກ່ເດັກນ້ອຍ. ແຕ່ເມື່ອມາຮອດສັງຄົມມີຊົນຊັ້ນນິທານສັດຮັບການຂະຫຍາຍຕົວຢ່າງແຂງແຮງທີ່ສຸດຕາມຄວາມຕ້ອງການຂອງສັງຄົມໃນຄາວນັ້ນເຊັ່ນ: ດ້ານໜຶ່ງຊົນຊັ້ນທີ່ຖືກກົດຂີ່ຂູດຮີດ ເຫັນວ່ານິທານສັດນີ້ມີຜົນດີໃຫ້ແກ່ການຕໍ່ສູ້ຊົນຊັ້ນ, ເຂົາເຈົ້າຈຶ່ງປະດິດແຕ່ງນິທານສັດເພື່ອເປັນອາວຸດສະນິດໜຶ່ງທີ່ແຫຼມຄົມໃຊ້ໃນການໂຈມຕີຊົນຊັ້ນປົກຄອງ. ອີກດ້ານໜຶ່ງພວກສາສະໜາເຊິ່ງເປັນເຄື່ອງມືຂອງຊົນຊັ້ນປົກຄອງນັ້ນ ກໍ່ໄດ້ຊ່ວຍໃຫ້ນິທານສັດນີ້ເຂົ້າຮັບການເຜີຍແຜ່ບັນຫາຫຼັກສິນທຳໃນໝູ່ມະຫາຊົນ. ສະນັ້ນໃນເມື່ອກ່ອນຈຶ່ງມີຫຼາຍປະເທດໄດ້ມີນັກປະພັນສັດທີ່ລືຊື່ໃນໂລກເຊັ່ນ: ເອຊົບ ( ເກຣັກ ), ແຟເດຣີ ( ອີຕາລີ ), ລາຟົງແຕັນ ( ຝຣັ່ງ ), ຊາຕົກົບເຊດຣິນ ( ລັດເຊຍ )... ບັນດານັກປະພັນສະໄໝກ່ອນກໍເຄີຍໃຊ້ນິທານສັດເພື່ອສະແດງເຖິງແນວຄິດ ແລະ ທັດສະນະຂອງຕົນຢູ່ສະເໝີ; ເພາະນິທານສັດມີຄວາມສາມາດນຳເອົາບັນຫານາມມະທຳຂອງຄົນເຮົາໄປເຜີຍແຜ່, ແລ້ວເຮັດໃຫ້ຄົນເຮົາຮັບຮູ້ບັນຫາເຫຼົ່ານັ້ນໄດ້ຢ່າງງ່າຍດາຍ.

ນິທານສັດມີຄວາມອຸດົມສົມບູນເຊິ່ງລວມເຖິງນິທານສັດທີ່ໄດ້ແຕ່ງຂຶ້ນດ້ວຍປາກເປົ່າ ແລະ ນິທານສັດທີ່ແຕ່ງຂຶ້ນດ້ວຍການຂຽນ. ນິທານສັດຂອງລາວມີຈຸດພິເສດນຳເອົາຫຼັກທຳຂອງສາສະໜາພຸດ. ເຊິ່ງແທດເໝາະກັບແນວຄິດຂອງຊົນຊັ້ນສັກດິນາເພື່ອເຜີຍແຜ່ໃຫ້ມະຫາຊົນ. ສະນັ້ນ ຈຶ່ງໄດ້ເວົ້າໄດ້ວ່ານິທານສັດໄດ້ມີສີສັນຂອງສາສະໜາພຸດຢ່າງຈະແຈ້ງ (ກຽງແກ້ວ ນອນນະວົງ ແລະຄະນະ, 2001).

**2. ການກຳເນີດ ແລະ ການຂະຫຍາຍຕົວຂອງນິທານສັດ.** (10 ນາທີ)

**<u>ກິດຈະກຳ 2:</u>**

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕຳລາ

  1) ການກຳເນີດ ແລະ ການຂະຫຍາຍຕົວຂອງນິທານສັດເປັນແນວໃດ?

- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູສະຫຼຸບບົດຮຽນກິດຈະກຳ: (5 ນາທີ)

ນິທານສັດມີເຄົ້າມາຈາກການອອກແຮງງານ ແລະ ການດຳລົງຊີວິດຂອງຄົນເຮົາແຕ່ສະໄໝບູຮານ ແຕ່ນິທານສັດຂະຫຍາຍຕົວໃນເງື່ອນທີ່ການຄົ້ນຄິດຂອງຄົນເຮົາມີການຂະຫຍາຍສູ່ລະດັບສູງ ສົມຄວນແລ້ວ ຮູ້ຈຳແນກປາກົດການ ແລະ ແນວຄິດນາມມະທຳ. ເມື່ອສຶກສາເບິ່ງແລ້ວ, ເຫັນວ່າໄດ້ຂະຫຍາຍຕົວຢູ່ໃນສອງໄລຍະຄື:

- **ໄລຍະຕົ້ນ:** ແມ່ນໄລຍະການຄົ້ນຄິດຂອງຄົນເຮົາຢູ່ໃນລະດັບຕ່ຳ ບົດດາບົດເລື່ອງທີ່ກຳເນີດໄລຍະນີ້ພຽງແຕ່ເປັນບົດເລື່ອງເລົ່າເຊັ່ນ: ການອະທິບາຍກ່ຽວກັບຈຸດພິເສດ, ລັກສະນະປະຈຳຕົວຂອງແຕ່ລະປະເພດສັດເຊັ່ນ: ຮູ້ຮ່າງ ສີສັນ, ສຽງຮ້ອງ. ສະນັ້ນເນື້ອໃນຂອງມັນແມ່ນເພື່ອສຶກສາຄວາມຮູ້ກ່ຽວກັບສັດເທົ່ານັ້ນ.
- **ໄລຍະທີ່ສອງ:** ໄລຍະນີ້ ແມ່ນນອນຢູ່ໃນໄລຍະທີ່ຄົນເຮົາກ້າວສູ່ລະດັບສູງສົມຄວນ, ຮູ້ເອົາເລື່ອງສັດມາສົມທຽບໃສ່ເລື່ອງຄົນ; ຈາກບ່ອນນີ້ພາໃຫ້ນິທານສັດທີ່ເລົ່າກ່ຽວກັບສັດກ້າວໜ້າຂະຫຍາຍຕົວກາຍເປັນນິທານທີ່ມີເນື້ອໃນຄວາມໝາຍທາງດ້ານສັງຄົມຢ່າງຈະແຈ້ງ ເຊິ່ງເວົ້າໄດ້ວ່າຢູ່ໃນໄລຍະຂະຫຍາຍຕົວແຮງທີ່ສຸດ. ຄົນເຮົາໄດ້ໃຊ້ຈິດສຳນຶກຂອງຕົນເພື່ອປັບແຕ່ງບົດເລື່ອງໃຫ້ມີມູນຄວາມຈິງມາຮັບໃຊ້ເນື້ອໃນຄວາມໝາຍທີ່ມີລັກສະນະນາມມະທຳອັນເປັນຈຸດປະສົງຕົ້ນຕໍ່ຂອງບົດເລື່ອງ.

ນິທານສັດຂອງລາວມີຄວາມອຸດົມສົມບູນ ແລະ ເນື້ອໃນດີ, ຕາມແນວຄິດຂອງປະຊາຊົນຜູ້ອອກແຮງງານອັນແທ້ຈິງ ແຕ່ຍ້ອນຂາດການເກັບກຳທ້ອນໂຮມ ມັນຈຶ່ງບໍ່ໄດ້ຮັບການຟື້ນຟູ ແລະ ແຜ່ຂະຫຍາຍກວ້າງຂວາງປານໃດ. ໃນປັດຈຸບັນນີ້ ຈຳນວນໜຶ່ງທີ່ເກັບກຳໄດ້ນັ້ນຍັງບໍ່ທັນໄດ້ຫຼາຍປານໃດແຕ່ກໍ່ເວົ້າໄດ້ວ່າ ນິທານສັດສ່ວນຫຼາຍນອກຈາກຈະອະທິບາຍເຖິງຈຸດພິເສດລັກສະນະຂອງສັດແລ້ວຍັງມີຄວາມໝາຍທາງດ້ານສັງຄົມອີກເຊັ່ນ: ການພົວພັນລະຫວ່າງເພື່ອນມິດ, ທັດສະນະການອອກແຮງງານ ແລະ ອື່ນໆ. ຖ້າສົມທຽບໃສ່ເລື່ອງພື້ນເມືອງອື່ນໆແລ້ວເຫັນວ່າ ນິທານສັດໄດ້ຮັບຄວາມເອົາໃຈໃສ່ເປັນພິເສດ ຈາກນັກຄົ້ນຄວ້າສະໄໝກ່ອນ ເພາະວ່າ, ນິທານມີຄວາມແທດເໝາະກັບການນຳເອົາບັນດາຫຼັກທຳຂອງສາສະໜາ ກໍຄືທັດສະນະແນວຄິດຂອງບັນດາຊົນຊັ້ນສັກດີນາໄປເຜີຍແຜ່ໃນມະຫາ ຊົນເຊິ່ງພາໃຫ້ນິທານສັດມີລັກສະນະສາສະໜາພຸດຢ່າງຈະແຈ້ງ ແລະ ເລິກເຊິ່ງພໍສົມຄວນ (ກຽງແກ້ວ ນອນນະວົງ ແລະ ຄະນະ, 2001).

**3. ເນື້ອໃນສ່ອງແສງຂອງນິທານສັດ** (20 ນາທີ)

**<u>ກິດຈະກຳ 3:</u>**

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕຳລາ
  1) ນິທານນສັດ ມີເນື້ອໃນສ່ອງແສງຫຍັງແດ່?
- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູສະຫຼຸບບົດຮຽນກິດຈະກາ: (15 ນາທີ)

**3.1 ມີເນື້ອໃນຄວາມໝາຍສຶກສາຄວາມຮູ້ກ່ຽວກັບສັດ**

ການເອົາເລື່ອງສັດມາເວົ້າເລື່ອງຄົນ ແມ່ນການປະດິດແຕ່ງທີ່ສະຫຼາດຫຼັກແຫຼມທີ່ສຸດຂອງປະຊາຊົນຜູ້ອອກແຮງງານ ຫຼື ເວົ້າອີກຢ່າງໜຶ່ງກໍຄືຄວາມສະຫຼາດຂອງປະຊາຊົນໄດ້ສະແດງອອກໃນນິທານຢ່າງຈະແຈ້ງ ແລະ ເດັ່ນທີ່ສຸດທັງມີຫຼາຍຮູບຫຼາຍແບບທີ່ສຸດ. ສິ່ງທີ່ເຮົາເຫັນໄດ້ງ່າຍ ແລະ ເຫັນໄດ້ວ່າໝູ່ນິທານສັດ ແມ່ນຄວາມຮູ້ທາງດ້ານທຳມະຊາດໂດຍສະເພາະແມ່ນການສັງເກດເຫັນບັນດາຈຸດພິເສດ, ລັກສະນະຮູບຮ່າງ, ສີສັນ, ສຽງຮ້ອງ, ຄວາມຊິນເຄີຍໃນການເຄື່ອນໄຫວຂອງສັດແຕ່ລະປະເພດ... ເລື່ອງ “ ນົກຖົ່ວຫົວຫງອກ ” ໄດ້ເລົ່າຢ່າງຈັບໃຈວ່າ ໃນຂະບວນທີ່ນົກທັງຫຼາຍກຳລັງປູກຕົ້ນໄມ້ເຊິ່ງເປັນບ່ອນເພິ່ງພາອາໄສຂອງນົກຕາມຄຳສັ່ງຂອງພະອິນນັ້ນ. ນົກແຕແຕວແວັດພັດເມົາ

ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

ມົວແຕ່ສຽງຮ້ອງອັນອອນຊອນຂອງຕົນ ແຕ່ນົກຖົວພັດເມົາມົວແຕ່ບິນໄປຫຼິ້ນ. ເມື່ອພະອິນຮູ້ຈັກແນວນັ້ນຈຶ່ງລົງໂທດໂດຍຫາກບໍ່ໃຫ້ນົກແຕແຕວແວັດເຈັບຕົ້ນໄມ້ ມີແຕ່ໃຫ້ຫາກິນ ແລະ ເຮັດຮັງຢູ່ຕາມໜ້າດິນ; ຮອດຍາມນອນກໍໃຫ້ນອນຫງາຍຕີນຊີ້ຂຶ້ນຟ້າ, ສັ່ງໃຫ້ນົກຖົວບິນໄປໜ້າຈົນຫົວຫງອກ ແຕ່ບໍ່ທັນເຫັນຂອບຟ້າຢູ່ບ່ອນໃດ ຫຼື ເລື່ອງ “ ຊ້າງ ແລະ ເຜິ້ງໂກນ ” ໄດ້ລະບາຍກ່ຽວກັບງວງ ແລະ ຄວາມສາມາດກ່ຽວກັບງວງຊ້າງ ແລະ ເປັນຫຍັງແມງເຜິ້ງຈຶ່ງເຮັດຮັງໃຫ້ໂກນໄມ້. ເລື່ອງ “ ງົວ ແລະ ມ້າ ” ໄດ້ອະທິບາຍສຽງຮ້ອງຂອງງົວ, ເປັນຫຍັງຈຶ່ງບໍ່ອະທິບາຍກ່ຽວ ກັບສຽງມ້າ... ແນ່ນອນເລື່ອງເລົ່າປະເພດນີ້ ນອກຈາກໃຫ້ຄວາມຮູ້ກ່ຽວກັບຈຸດພິເສດຂອງສັດແລ້ວຍັງມີຄວາມໝາຍຕິຕຽນນິໄສຂີ້ຄ້ານ ຮູ້ແຕ່ຫຼິ້ນ ແລະ ອື່ນໆ.

**3.2 ມີເນື້ອໃນເວົ້າເຖິງບົດຮຽນເປັນຄຳສອນ.**

ເນື້ອໃນທີ່ອຸດົມສົມບູນກວ່າໝູ່ໃນນິທານສັດ ແມ່ນຄຳສັ່ງສອນຂອງຄົນເຮົາໂດຍຜ່ານການດຳລົງຊີວິດຕົວຈິງຂອງຄົນເຮົາ; ໄດ້ສັງເກດຖອດຖອນບົດຮຽນສະຫຼຸບເລືອກເຟັ້ນສິ່ງມີລັກສະນະສັດຈະທຳ ແລະ ປັດຊະຍາເປັນບັນຫາສຳຄັນ. ໃນບົດເລື່ອງ “ ເຕົ່າ ແລະ ຫ່ານ ” ໄດ້ຕັກເຕືອນໃຫ້ຮູ້ຈັກຟັງຄວາມໝູ່ບອກສອນບໍ່ກະທຳຕາມໃຈຕົນ. ໃນບົດເລື່ອງ “ ເຕົ່າ ແລະ ຫອຍ ” ໄດ້ຕິຕຽນແນວຄິດອວດອົ່ງທະນົງຕົວປະໝາດຜູ້ອື່ນ. ໃນບົດເລື່ອງ “ ລິງ ແລະ ນົກຈອກຟ້າ ” ໃຫ້ຮູ້ວ່ານົກຈອກຟ້າເປັນຕົວລະຄອນທີ່ເປັນສັນຍາລັກແກ່ຄວາມດຸໝັ່ນທີ່ມີຫົວຄິດປັນຍາຫາກຸ້ມຕົນເອງ. ນົກຈອກເຫັນລິງນັ່ງຕາກຝົນສັ່ນໝາວທິດໆ ຈຶ່ງມີຄວາມສົງສານ ແລະ ເວົ້າວ່າ: ລິງໃຫຍ່ມີຕີນມີມືຄືມະນຸດເປັນຫຍັງຈຶ່ງບໍ່ເຮັດເຮືອນນ້ອຍຢູ່ເພື່ອບັງລົມບັງຝົນ; ລິງເສຍກຽດຄຽດຂົມ ແລະ ໂມໂຫຂຶ້ນຈຶ່ງປີນຂຶ້ນຕົ້ນໄມ້ໄປເອົາຮັງນົກຈອກມາຍ່ອງຖິ້ມ. ການເຕືອນຂອງນົກຈອກຟ້ານັ້ນແມ່ນມີຈຸດປະສົງດີ ແຕ່ບໍ່ຖືກເປົ້າໝາຍ ແລະ ເໝາະສົມ. ການຕັກເຕືອນຄົນຫຍາບຊ້າຫາຄວາມຕ້ອງມີວິທີການອັນເລິກແລບ ແລະ ນິ້ມນວນ; ເພາະສະນັ້ນຈະເປັນຜົນຮ້າຍແກ່ຕົວເອງ ຫຼື ນິທານ “ ຜົວເມຍນົກຈອກ ” ແມ່ນການສະໜັບສະໜູນຄວາມຮັກອັນບໍລິສຸດ, ຕຳນິກ່າວປະນາມດ້ານແນວຄິດການກະທຳທີ່ຕ່ຳຕ້ອຍ, ຂາດຄວາມຊື່ສັດໃນຄວາມຮັກລະຫວ່າງຍິງຊາຍ ທຳອິດກໍວ່າຮັກ, ຄຳໜຶ່ງກໍ່ວ່າຮັກ, ສອງຄຳກໍວ່າຮັກ ແລະ ສັນຍາກັນວ່າຈະພ້ອມກັນຕາຍ; ບາດເວລາພົບພໍ້ອັນຕະລາຍພັດເຫັນແກ່ຊີວິດຕົນຜູ້ດຽວໂດຍປົບໜີປະໃຫ້ລູກກັບເມຍຕາຍຄາຮັງ. ບົດເລື່ອງນີ້ໄດ້ກ່າວປະນາມການເຫັນແກ່ຕົວຂາດສັດຈະ, ຂາດນ້ຳໃຈບໍລິສຸດຕໍ່ລູກຕໍ່ເມຍ.

**3.3 ສ່ອງແສງເຖິງການຕໍ່ສູ້ຊົນຊັ້ນ.**

ເມື່ອສັງຄົມເກີດມີຊົນຊັ້ນ, ມີຜູ້ທຸກ,ຜູ້ຮັ່ງ. ນິທານສັດໄດ້ກາຍເປັນອາວຸດທີ່ແຫຼມຄົມ ເພື່ອຕໍ່ສູ້ຊົນຊັ້ນ. ເວົ້າເຖິງຂໍ້ຂັດແຍ່ງ ແລະ ການຕໍ່ສູ້ໃນສັງຄົມ, ດາບຢູ່ເໜືອ ຄໍຢູ່ໃຕ້ ປະຊາຊົນບໍ່ມີຫົນທາງອື່ນໃດອີກແລ້ວ ມີແຕ່ຕໍ່ສິດ ແຕ່ຈະຕໍ່ສູ້ແນວໃດເພື່ອບໍ່ໃຫ້ສັດຕູລົງໂທດໄດ້, ທັງຮັກສາກຳລັງໄວ້ໃຫ້ປອດໄພຈຶ່ງເອົາວັນນະຄະດີເຂົ້າໃນການຕໍ່ສູ້ ເຊັ່ນ : ນິທານສັດມາເປັນອາວຸດທີ່ແຫຼມຄົມຂອງປະຊາຊົນຜູ້ອອກແຮງງານນັບແຕ່ທ່າທີ, ສຽງຫົວເຍາະເຍີ້ຍ, ກ່າວເຕື່ອນປະຈານໜ້າ ຄືເລື່ອງ : ເສືອເຖົ້າຈຳສິນ , ແມວເຖົ້າໄປບວດ ເຊິ່ງເວົ້າເຖິງການປິດບັງທາດແທ້ສິນທຳແບບຈອມປອມຂອງຊົນຊັ້ນປົກຄອງ, ມືຖືສາກ ປາກຖືສິນ, ປາກເປັນທຳ ຫົວໃຈເປັນຍັກ ໂດຍນຳໃຊ້ວິທີສົມທຽບທາງອ້ອມເອົາເລື່ອງສັດມາເວົ້າເລື່ອງຄົນ ເຊິ່ງມັນແມ່ນຈຸດເດັ່ນຂອງນິທານສັດ, ມີແຕ່ນຳໃຊ້ຮູບການແບບນີ້ຈຶ່ງຊ່ວຍໃຫ້ຊົນຊັ້ນ

ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

ອອກແຮງງານຫຼຸດພົ້ນຈາກການຖືກລົງໂທດໄດ້. ບັນດາບົດເລື່ອງໄກ່ ແລະ ເຫັງນ, ຊ້າງ ແລະ ນົກໃສ ແມ່ນຍ້ອງຍໍສັນລະເສີນຄວາມສະຫຼຽວສະຫຼາດ, ສາມັກຄີຮັກແພງ, ຮູ້ເຕົ້າໂຮມກຳລັງເຖິງຈະສັດນ້ອຍກຳລັງນ້ອຍ, ແຕ່ຮູ້ວິທີຕໍ່ສູ້, ສະຫຼາດມີພິກໄຫວກໍ່ຈະໄດ້ຮັບໄຊຊະນະ. ຕາມທັດສະນະຂອງພວກສາສະໜາ ແລະ ຊົນຊັ້ນສັກດິນາແລ້ວຄົນເຮົາມີຊີວິດ ຫຼື ຕາຍນັ້ນແມ່ນຂຶ້ນກັບໂຊກສະຕາອາດສະໜານັ້ນນຳສິ່ງ ໂດຍແມ່ນພະອິນພະພົມເປັນຜູ້ລິຂິດ ເຊິ່ງສະແດງແຈ້ງໃນເລື່ອງ ປາສາມໂຕ ການເຊື່ອຖືແບບບາບບຸນຂອງສາສະໜາກໍເປັນບັນຫາໜຶ່ງທີ່ສະແດງອອກຢ່າງຈະແຈ້ງ ຜູ້ກະທຳດີເມື່ອຕາຍໄປກໍ່ຈະໄປເຖິງສະຫວັນ, ຜູ້ກະທຳຊົ່ວເມື່ອຕາຍໄປຈະຕົກນະຣົກ.... (ກຽງແກ້ວ ນວນນະວົງ ແລະຄະນະ, 2001).

**4. ສິລະປະການປະດິດແຕ່ງຂອງນິທານສັດ** (15 ນາທີ)

**ກິດຈະກຳ 4:**

- ຄູຕັ້ງຄຳຖາມໃຫ້ນັກສຶກສາຄົ້ນຄວ້າ, ສະເໜີນັກສຶກສາອ່ານປຶ້ມຕຳລາ
  1) ນິທານສັດ ມີສິລະປະແນວໃດ?
- ຄູໃຫ້ນັກສຶກສາຕອບ 1-2 ຄົນ (5 ນາທີ)
- ຄູສະຫຼຸບບົດຮຽນກິດຈະກຳ: (10 ນາທີ)

ໃນການປະດິດແຕ່ງນິທານສັດ ເພື່ອຕອບສະໜອງຈຸດພິເສດດ້ານເນື້ອໃນ ແລະ ຄວາມໝາຍທີ່ມີລັກສະນະດ້ານນາມມະທຳນັ້ນ. ຄົນເຮົາໄດ້ໝູນໃຊ້ສິລະປະຫຼາຍຢ່າງເຊັ່ນ: ໃຊ້ວິທີສົມທຽບໂດຍທາງອ້ອມ, ໃຊ້ຈິດສຳນຶກຖືສັດເປັນຄືຄົນ ແລະ ສຽງຫົວເຍາະເຍີ້ຍ. ໂຄງຮ່າງຂອງເລື່ອງສັ້ນ ກະທັດຮັດງ່າຍດາຍທາງນີ້ກໍ່ເພື່ອເລົ່າໄດ້ງ່າຍ ແລະ ຈື່ຈຳໄດ້ໄວສ້າງຄວາມມ່ວນຊື່ນຈັບອົກຈັບໃຈແກ່ຜູ້ອ່ານ, ຜູ້ຟັງທັງຫຼາຍ.

ຈຸດປະສົງຕົ້ນຕໍຂອງນິທານສັດ ແມ່ນຖ່າຍທອດຄວາມຮູ້ ແລະ ບົດຮຽນອັນເປັນຄະຕິເຕືອນໃຈໃຫ້ທຸກຄົນ. ການສຶກສາຄົ້ນຄວ້າວິທີສົມທຽບ ໂດຍທາງອ້ອມແບບເລົ່າເລື່ອງສັດ ອີງໃສ່ຈຸດພິເສດຂອງສັດແຕ່ລະປະເພດ ເພື່ອສ້າງຕົວລະຄອນອັນເປັນສັນຍາລັກໃຫ້ແກ່ກຸ່ມຄົນໃດໜຶ່ງໃນສັງຄົມ. ຢາກເຮັດໄດ້ແນວນີ້ນັກແຕ່ງນິທານສັດຕ້ອງມີການສັງເກດຊອກຮູ້ກ່ຽວກັບຄວາມຊິນເຄີຍ. ຈຸດພິເສດ ແລະ ລັກສະນະຂອງສັດແຕ່ລະປະເພດທີ່ຈະເອົາມາສົມທຽບໃສ່ກຸ່ມຄົນ ຫຼື ຊັ້ນຄົນໃດໜຶ່ງໃນສັງ ຄົມ. ແຕ່ລະຊາດແຕ່ລະຊົນເຜົ່າຕ່າງກໍມີທັດສະນະຕ່າງຫາກຂອງຕົນໃນການສັງເກດ ແລະ ກຳນົດລັກສະນະສະເພາະ ຂອງສັດແຕ່ລະປະເພດ. ປະຊາຊົນລາວເຄີຍຖືວ່າ ຕົວຈອນຟອນເປັນຕົວແທນຂອງນິໄສວ່ອງໄວແຕ່ຫາກຈອງຫອງ; ກະຕ່າຍເປັນຕົວແທນຂອງນິໄສສະຫຼາດ, ວ່ອງໄວແຕ່ມັກສະເງີ້ເຜີຕົວ; ລີງເປັນຕົວແທນຂອງຄວາມວ່ອງໄວແຕຫາກຫຍາບຊ້າ ແລະ ອື່ນໆ.

ການປະດິດແຕ່ງນິທານສັດ ຍັງໝູນໃຊ້ຈິດສຳນຶກຫຼາຍທີ່ສຸດ, ອັນເຮັດໃຫ້ຄວາມຮັບຮູ້ດ້ານສະຕິອິນຊີຂອງຄົນເຮົາເລິກເຊິ່ງຕື່ມອີກ. ແຕ່ຍ້ອນຈິດສຳນຶກໃນນິທານສັດ ພຽງແຕ່ເປັນພາຫະນະຮັບໃຊ້ໃຫ້ຈຸດປະສົງຂອງບົດເລື່ອງ. ສະນັ້ນ ຈິດສຳນຶກໃນນິທານສັດເຖິງວ່າໄດ້ໝູນໃຊ້ຢ່າງກວ້າງຂວາງແຕ່ກໍຍ່ອມຢູ່ໃຕ້ເງື່ອນໄຂຊີ້ນຳຢ່າງເຂັ້ມງວດຂອງຈິດປັນຍາ. ບໍ່ສາມາດຂະຫຍາຍເຖິງບ່ອນມະຫັດສະຈັນ ຄືນິທານອັດສະຈັນໄດ້.

ຂໍ້ມູນຕິດຕໍ່:
Email: syvongsak123@gmail.com ໂທ: +85620 98003648

ລັກສະນະລະຄອນກໍແມ່ນຮູບການສິລະປະອັນໜຶ່ງອີກຂອງນິທານສັດ. ສະນັ້ນຈຶ່ງອາດເວົ້າໄດ້ວ່ານິທານສັດບົດໜຶ່ງກໍປ່ຽບເໝືອນລະຄອນບົດໜຶ່ງ. ຢູ່ໃນລະຄອນສັດເຄີຍມີຂໍ້ຂັດແຍ່ງເກີດຂຶ້ນລະຫວ່າງສະພາບ ປາກົດການ ແລະ ນິໄສຂອງຕົວລະຄອນດຽວກັນ. ການດຳເນີນເລື່ອງໃນນິທານ ສັດມີລັກສະນະງ່າຍດາຍ ແຕ່ເຄີຍມີການຫັນປ່ຽນຢ່າງບັງເອີນທີ່ພາໃຫ້ເກີດຂໍ້ຂັດແຍ່ງຂຶ້ນ. ລັກສະນະລະຄອນໃນນິທານສັດເປັນປັດໃຈພາໃຫ້ເພີ່ມຄວາມຈັບອົກຈັບໃຈສຳລັບຜູ້ອ່ານ ຜູ້ຟັງ ການແກ້ຂໍ້ຂັດແຍ່ງແຕ່ລະຄັ້ງ ຈະເຮັດໃຫ້ມີສຽງຫົວເຍາະເຍີ້ຍສຽດສີເກີດຂຶ້ນໃນນິທານສັດ. ດັ່ງທີ່ເຫັນໃນເລື່ອງ ນົກອິນຊີ ແລະ ນົກເຄົ້າແມວ , ແມວເຖົ້າຈຳສິນ , ກາກິນບົ້ງ , ເສືອ ແລະ ຊາວນາ ແລະອື່ນໆ.

ຈຸດພິເສດອັນໜຶ່ງໃນສິລະປະການແຕ່ງນິທານສັດລາວເຮົາແມ່ນການມ່ອນທ້າຍສຸພາສິດທີ່ມີລັກສະນະກາບກອນອັນເຮັດໃຫ້ນິທານສັດຂອງລາວເຮົາມີຄວາມໝາຍສຶກສາແບບນິ້ມນວນ ແລະ ເລິກເຊິ່ງຍິ່ງຂຶ້ນ.

ນິທານສັດ ແມ່ນເລື່ອງເລົ່າທົ່ວໄປຂອງທຸກໆຊາດ. ນິທານສັດຕ່າງກັບນິທານມະຫັດສະຈັນຢູ່ບ່ອນວ່າມັນບໍ່ພັດທະນາ ແລະ ສ່ອງແສງລົງເລິກ ເຖິງຊີວິດການເປັນຢູ່ຂອງຊາດໃດຊາດໜຶ່ງ. ດັ່ງນັ້ນ, ເຖິງວ່າລັກສະຊາດສະແດງອອກຂອງສ່ວນໃດສ່ວນໜຶ່ງຂອງວິທີສົມທຽບ. ໃນລັກສະນະກາບກອນ ແລະ ໃນການກຳລັກສະນະຂອງສັດຕ່າງໆ. ແຕ່ເບິ່ງລວມແລ້ວນິທານສັດຍັງມີລັກສະນະລວມທົ່ວໄປຢ່າງຫຼວງຫຼາຍ. ມາເຖິງປັດຈຸບັນນີ້ ນິທານສັດຫຼາຍເລື່ອງທີ່ບໍ່ຮູ້ວ່າເປັນເລື່ອງຊາດໃດແທ້. ນິທານສັດເປັນແຫຼ່ງຄວາມຮູ້ຂອງປະຊາຊົນ. ສ່ອງແສງເຖິງການຕໍ່ສູ້ເພື່ອສິດຜົນປະໂຫຍດ ແລະ ທີ່ຕັ້ງໃນສັງຄົມຂອງປະຊາຊົນ. ສ່ອງແສງເຖິງຄວາມກ້າວໜ້າອັນບໍ່ຮູ້ຢຸດຢັ້ງຂອງຈິດປັນຍາການຮັບຮູ້ໂລກ ແລະ ຮັບຮູ້ສັງຄົມ.

ໃນປັດຈຸບັນນີ້ເຖິງແມ່ນວ່ານິທານສັດຂະຫຍາຍຕົວແຮງປານໃດກໍຕາມ, ແຕ່ມັນກໍມີຄຸນປະໂຫຍດຢ່າງຫຼວງຫຼາຍ ແລະ ຍັງເປັນສິ່ງຈຳເປັນທີ່ສຸດໃນການສຶກສາອົບຮົມຄົນຮຸ່ນໃໝ່ໃຫ້ກາຍເປັນຄົນສັງຄົມນິຍົມ. ຢູ່ໃນບັນດາປະເທດທີ່ມີເງື່ອນໄຂສະດວກເພິ່ນໄດ້ເກັບກຳທ້ອນໂຮມເອົານິທານສັດມາພິມເປັນປຶ້ມອ່ານປະກອບຮູບພາບ, ບາງເລື່ອງກໍ່ເອົາມາສ້າງເປັນຮູບເງົາກາຕູນ ຫຼື ເປັນລະຄອນກ້ອມເພື່ອສຶກສາຜູ້ອ່ານຜູ້ຊົມທັງຫຼາຍ, ໂດຍສະເພາະຢ່າງຍິ່ງແບບເດັກນ້ອຍ (ພູວົງ ໜໍ່ດາລາ ແລະຄະນະ, 2018).

## III. ຂັ້ນສະຫຼຸບ

- **ຄູເນັ້ນຈຸດສຳຄັນຂອງບົດຮຽນ**
  - ຄວາມໝາຍ ແລະ ຈຸດພິເສດຂອງນິທານສັດ
  - ການກຳເນີດ ແລະ ການຂະຫຍາຍຕົວຂອງນິທານສັດ
  - ເນື້ອໃນສ່ອງແສງຂອງນິທານສັດ
  - ສິລະປະຂອງນິທານສັດ

## IV. ວັດ ແລະ ປະເມີນ

- ຄູຖາມຂໍ້ຂ້ອງໃຈຂອງນັກຮຽນ (ຖ້າມີ) ຄູອະທິບາຍຄືນ
- ຄູຕັ້ງຄຳຖາມ: ແຕ່ລະຂໍ້ຂອງບົດຮຽນ
- ໃຫ້ນັກຮຽນຕອບ 1-2 ຄົນ
- ຄູສັງເກດຄຳຕອບ ແລະ ສະຫຼຸບຄືນ

ຂໍ້ມູນຕິດຕໍ່:

Email: syvongsak123@gmail.com ໂທ: +85620 98003648

**V. ຂັ້ນຕັກເຕືອນ**

- ຄູແນະນໍານັກຮຽນອ່ານບົດຮຽນໃໝ່
- ສຶກສາແນວຄິດຂອງຜູ້ຮຽນ
- ມອບວຽກບ້ານ

**ເອກະສານອ້າງອີງ**

ກຽງແກ້ວ ນອນນະວົງ ແລະຄະນະ. (2001). ວັນນະຄະດີລາວ. ລະຫັດ 630LI 222. ວິທະຍາໄລ ວິທະຍາສາດພື້ນຖານ. ຄະນະອັກສອນສາດ. ມະຫາວິທະຍາໄລແຫ່ງຊາດ.

ບຸນລ້ອມ ສີບຸນເຮືອງ ແລະຄະນະ. (2014). ແບບຮຽນວັນນະຄະດີ ຊັ້ນມັດທະຍົມສຶກສາປີທີ 5. ກະຊວງສຶກສາທິການ ແລະກິລາ. ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ.

ພູວົງ ໜໍ່ດາລາ ແລະຄະນະ. (2018). ວັນນະຄະດີພື້ນເມືອງ. ຄະນະສຶກສາສາດ. ມະຫາວິທະຍາໄລ ສຸພານຸວົງ.

ຄູສອນປະຈໍາວິຊາ



ປທ. ສົມທະເພີຍ ສີວົງສັກ